**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

**ແຂວງບໍ່ແກ້ວ**

ເຈົ້າແຂວງ

ເລກທີ...392.../ຈຂ.ບກ

ບໍ່ແກ້ວ, ວັນທີ..12..04..2023

**ຄໍາສັ່ງ**

**ເຖິງ**: ທ່ານ ເຈົ້າເມືອງ 05 ເມືອງ, ຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສອງກອງບັນຊາການ ປກຊ-ປກສ ແຂວງ, ອໍານວຍການໂຮງຮຽນ, ໂຮງໝໍ ລັດວິສາຫະກິດ, ທະນາຄານທຸລະກິດ ພາກລັດ ແລະ ເອກະຊົນ, ຜູ້ປະກອບການ, ປະຊາຊົນບັນດາເຜົ່າ ແລະ ຊາວຕ່າງປະເທດ ທີ່ອາໄສຢູ່ແຂວງບໍ່ແກ້ວ.

**ເລື່ອງ:** ເພີ່ມທະວີຄວາມຮັບຜິດຊອບສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂບັນຫາໄຟໄໝ້ລາມປ່າ ແລະ ບັນຫາໝອກຄວັນໃນປັດຈຸບັນ ກໍຄືສະເພາະໜ້າ ແລະ ຍາວນານ.

- **ອີງຕາມ** ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- **ອີງຕາມ** ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 591/ຫສນຍ, ລົງວັນທີ 10 ເມສາ 2023.

ປະຈຸບັນໄດ້ມີເຫດການໝອກຄວັນ ຝຸ່ນລະອອງ PM 2,5 ເກີນຄ່າມາດຖານ ອັນເກີດຈາກການຈູດປ່າ, ຈູດໄຮ່ສວນ ແລະ ຈູດຂີ້ເຫຍື້ອຊະຊາຍ ເຊິ່ງສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ສິ່ງແວດລ້ອມ, ການດໍາລົງຊີວິດ, ສຸຂະພາບຂອງປະຊາຊົນບັນດາເຜົ່າ ຕໍ່ກັບສະພາບການດັ່ງກ່າວ ຖ້າພວກເຮົາຍັງເມີນເສີຍ ປ່ອຍປະ ແລະ ຂາດຄວາມຮັບຜິດຊອບ ຈະເຮັດໃຫ້ເນື້ອທີ່ປ່າໄມ້ຫຼຸດລົງ, ມີໝອກຄວັນເກີນຄ່າມາດຕະຖານປົກຄຸມອາຍມົນລະພິດເພີ່ມຂຶ້ນ ສະນັ້ນ ເພື່ອສະກັດກັ້ນ ແລະ ຮັບມືກັບເຫດການດັ່ງກ່າວໃຫ້ໄດ້ຢ່າງທັນການ ແລະ ສາມາດແກ້ໄຂໄດ້ຢ່າງຂາດຕົວ.

**ເຈົ້າແຂວງ ແຂວງບໍ່ແກ້ວ ອອກຄໍາສັ່ງ:**

1. ໃຫ້ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ສໍານັກງານ-ອົງການ, ບໍລິສັດ ແລະ ປະຊາຊົນ ຜູ້ດໍາລົງຊີວິດຢູ່ພາຍໃນແຂວງບໍ່ແກ້ວ ຈົ່ງສືບຕໍ່ເພີ່ມທະວີຄວາມຮັບຜິດຊອບໃນການຕ້ານ ສະກັດກັ້ນ ຄວບຄຸມ ແລະ ແກ້ໄຂບັນຫາໄຟໄໝ້ລາມປ່າ ແລະ ບັນຫາໝອກຄວັນ, ການຈູດປ່າ, ຈູດໄຮ່, ສວນ, ຈູດສິ່ງເສດເຫຼືອເປັນຈໍານວນຫຼວງຫຼາຍ ຢູ່ທຸກສະຖານທີ່ ທັງໃນເຂດຕົວເມືອງ, ຊານເມືອງໃຫ້ໄດ້ຢ່າງທັນການ; ສະນັ້ນ ເມື່ອມີເຫດການເກີດຂຶ້ນບ່ອນໃດໃຫ້ຫົວໜ້າອົງການຈັດຕັ້ງ, ອໍານາດການປົກຄອງຢູ່ບ່ອນນັ້ນ ເປັນຜູ້ຮັບຜິດຊອບຄວບຄຸມ ແລະ ແກ້ໄຂໂດຍກົງ ຢ່າງຂາດຕົວ.

2. ຕໍ່ກັບມາດຕະການໃນການສະກັດກັ້ນ, ຄວບຄຸມເຫດການໄຟໄໝ້ ແລະ ໝອກຄວັນຝຸ່ນລະອອງ ໃຫ້ປະຕິບັດຕາມກົດໝາຍກ່ຽວຂ້ອງກໍານົດໄວ້ຢ່າງເຂັ້ມງວດ ດັ່ງນີ້:

2.1 ໃຫ້ຈັດຕັ້ງປະຕິບັດ ຂໍ້ຫ້າມບໍ່ໃຫ້ຈູດສິ່ງເສດເຫຼືອເປັນຈຳນວນຫຼວງຫຼາຍແບບຊະຊາຍ, ຊຶ່ງໄດ້ກຳນົດໄວ້ ໃນມາດຕາ 68, ຂໍ້ທີ 3, 4 ຂອງກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012 ຢ່າງເຂັ້ມງວດ.

2.2 ຫ້າມບໍ່ໃຫ້ຈູດປ່າ ແລະ ຈູດໄຮ່, ຈູດສວນຊະຊາຍ ຊຶ່ງໄດ້ກຳນົດໄວ້ ໃນມາດຕາ 135, ຂໍ້ທີ 1 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ມາດຕາ 56, ຂໍ້ທີ 11 ຂອງກົດໝາຍ ວ່າດ້ວຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ 09/ສພຊ,ລົງວັນທີ 24 ທັນວາ 2007.

2.3 ເພີ່ມທະວີຄວາມຮັບຜິດຊອບໃນການຕິດຕາມ, ກວດກາ ແລະ ກຳນົດຈຸດທີ່ເປັນເຊື້ອເພີງ, ສິ່ງເສດເຫຼືອຈຳນວນຫຼວງຫຼາຍ ໃນພື້ນທີ່ຂອງຕົນ ທັງກຳນົດມາດຕະການປ້ອງກັນ, ກະກຽມເງື່ອນໄຂ, ຄວາມພ້ອມ ໄວ້ແຕ່ຫົວທີໃຫ້ຄົບຖ້ວນ ເພື່ອຮັບມືຢ່າງທັນການ.

2.4 ໃຫ້ທ່ານ ເຈົ້າເມືອງ, ນາຍບ້ານ, ຫົວໜ້າ ພະແນກການ-ອົງການ ແລະ ຜູ້ອຳນວຍການເອົາໃຈ ໃສ່ສຶກສາອົບຮົມ ພະນັກງານ, ລັດຖະກອນ, ກຳມະກອນ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດຂອງຕົນ ໃຫ້ຮັບຮູ້ ແລະ ເຂົ້າໃຈ ເຖິງຜົນເສຍຫາຍຂອງການຈູດສິ່ງເສດເຫຼືອເປັນຈຳນວນຫຼາຍ, ຈູດປ່າ, ຈູດທົ່ງນາ ສວນຊະຊາຍ ແລະ ທັງກຳແໜ້ນກົດໝາຍ, ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງຢ່າງເລິກເຊິ່ງ, ມີສະຕິຕື່ນຕົວ ໃນການປ້ອງກັນ ແລະ ເຂົ້າຮ່ວມຂະບວນການແກ້ໄຂອັກຄີໄພ, ອາຍຄວັນ ທີ່ເກີດຂຶ້ນ ໃນຂອບເຂດທີ່ຕົນອາໄສຢູ່ຢ່າງເປັນຂະບວນການ;

3 ມາດຕາການແກ້ໄຂຕໍ່ຜູ້ກໍ່ໃຫ້ເກີດເຫດການໄຟໄໝ້ ແລະ ມີອາຍຄວັນມົນລະພິດ, ສ້າງຄວາມເສຍຫາຍໃຫ້ປະຊາຊົນຢູ່ອ້ອມຂ້າງ ແລະ ສັງຄົມ ໃຫ້ດຳເນີນການກ່າວເຕືອນ ແລະ ດຳເນີນຄະດີທາງແພ່ງ ຫຼື ທາງອາຍາ ຕາມສະຖານໜັກ ຫຼື ເບົາ, ເຊິ່ງກົດໝາຍກ່ຽວຂ້ອງກຳນົດໄວ້, ໃນນັ້ນ ໃຫ້ເອົາໃຈໃສ່ປະຕິບັດ ມາດຕາ 69 ຂອງກົດໝາຍວ່າດ້ວຍການ ສະກັດກັ້ນ ແລະ ຕ້ານອັກຄີໄພສະບັບເລກທີ 09/ສພຊ, ລົງວັນທີ 24 ທັນວາ 2007; ມາດຕາ 92 ຫາ 97 ຂອງກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 29/ສພຊ, ລົງວັນທີ 18 ທັນວາ 2012; ມາດຕາ 167 ຫາ 173 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ອື່ນໆ.

4 ໃຫ້ແຕ່ງຕັ້ງໜ່ວຍງານສະເພາະ ເພື່ອແກ້ໄຂບັນຫາສິ່ງແວດລ້ອມ ແລະ ໂທລະສັບສາຍດ່ວນ ແຈ້ງເຫດການຈູດສິ່ງເສດເຫຼືອເປັນຈຳນວນຫຼວງຫຼາຍ ແລະ ຈູດປ່າຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ໃຫ້ລວມສູນຢູ່ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ສຳລັບຢູ່ຂັ້ນເມືອງ ໃຫ້ລວມສູນຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງເມືອງ, ໜ່ວຍງານສະເພາະຕ້ອງເຄື່ອນໄຫວຢ່າງຕັ້ງໜ້າ, ຮັບເບາະແສຂໍ້ມູນ ແລະ ເປັນຜູ້ກຳກັບເຫດການໄຟໄໝ້ ແລະ ອາຍຄວັນ.

5 ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ມອບໃຫ້ ພະແນກ ກະສິກຳ ແລະ ປ່າໄມ້, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດທັງໃຫ້ໄດ້ຮັບໄດ້ຮັບຜົນສູງ.

**ເຈົ້າແຂວງ ແຂວງບໍ່ແກ້ວ**

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ປອ ບົວຄົງ ນາມມະວົງ